PLAN INTERNATIONAL
Until we are all equal

ອົງການແພລນສາກົນ ປະຈຳ ສປປ ລາວ

ໂທ: +856 (0) 21 353 409 -11
www.plan-international.org/laos

ເຮືອນເລກທີ 203, ບ້ານໂພນສີນວນ, ເມືອງສີສັດຕະນາກ
ນະຄອນຫຼວງວຽງຈັນ, ສປປ ລາວ

# ອົງການແພລນສາກົນ ປະຈຳ ສ ປ ປ ລາວ

## ປະກາດແຈ້ງການເຂົ້າຮ່ວມສົມທຽບລາຄາການບໍລິການຈອງ ແລະ ຈັດຊື້ປີ້ລົດໄຟ ພາຍໃນປະເທດ

ອົງການແພລນສາກົນ ແມ່ນອົງການສາກົນທີ່ພັດທະນາຊຸມຊົນໂດຍຖືເອົາ ເດັກນ້ອຍເປັນໃຈກາງ ພວກເຮົາຊ່ວຍເຫຼືອເດັກທຸກຍາກຢູ່ຫຼາຍປະເທດທີ່ກຳລັງພັດທະນາໃນທົ່ວໂລກ. ປະຈຸບັນອົງການແພລນ ສາກົນປະຈຳ ສປປ ລາວ ກຳລັງຈັດຕັ້ງປະຕິບັດໂຄງການຢູ່ 03 ແຂວງ: ແຂວງ ບໍ່ແກ້ວ, ອຸດົມໄຊ, ສາລະວັນ ແລະ ມີຫ້ອງການໃຫຍ່ປະຈຳຢູ່ ນະຄອນຫຼວງວຽງຈັນ. ແຕ່ລະປີອົງການແພລນໄດ້ມີພະນັກງານຫຼາຍທ່ານ ເດີນທາງໄປ-ກັບຕ່າງແຂວງ ໂດຍໃຊ້ເສັ້ນທາງລົດໄຟ. ສະນັ້ນ, ອົງການແພລນສາກົນ ຂໍຖືໂອກາດແຈ້ງເຊີນມາຍັງທ່ານ, ຖ້າຫາກວ່າທ່ານມີຄວາມທີ່ສົນໃຈໃນການໃຫ້ບໍລິການຈັດຊື້ປີ້ລົດໄຟ ທ່ານສາມາດປະກອບເອກະສານມາສົມທຽບລາຄາ ຕາມລາຍລະອຽດລຸ່ມນີ້.

**ເງື່ອນໄຂ ແລະ ເອກະສານທີ່ຕ້ອງການ**

| | |
|---|---|
| – ສຳເນົາທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຍັງໃຊ້ໄດ້ | 1 ຊຸດ |
| – ສຳເນົາໃບຢັ້ງຢືນເສຍພາສີອາກອນປະຈຳປີ ປີ 2024 | 1 ຊຸດ |
| – ໃບສະເໜີລາຄາຄ່າບໍລິການ | 1 ຊຸດ |
| – ຄັດຕິດຜົນງານການບໍລິການຂອງທ່ານຜ່ານມາ (ຖ້າມີ) | 1 ຊຸດ |
| – ເງື່ອນໄຂອື່ນໆຕາມເອກະສານຕິດຂັດ | 1 ຊຸດ |

ບໍລິສັດ ຫຼື ຕົວແທນຈຳໜ່າຍ ທີ່ມີຄວາມສົນໃຈ ກະລຸນາເຂົ້າມາເອົາແບບຟອມສົມທຽບລາຄາ ແລ້ວປະກອບເອກະສານສົ່ງຫາຫ້ອງການອົງການແພລນສາກົນ ປະຈຳ ສປປ ລາວ ດັ່ງທີ່ຢູ່ຂ້າງລຸ່ມນີ້ ແລະ ມື້ສຸດທ້າຍໃນການຍື່ນເອກະສານສົມທຽບລາຄາແມ່ນບໍ່ໃຫ້ກາຍ **17:00 ໂມງແລງ** ຂອງວັນທີ **31 ມີນາ 2025.**

| *ຫ້ອງການອົງການແພລນປະຈຳນະຄອນຫລວງວຽງຈັນ* |
|---|
| *ເຮືອນເລກທີ 203, ໜ່ວຍ 10, ບ້ານ ໂພນສີນວນ, ມ. ສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ*<br>*ໂທ: + 856 (0) 21 353 409 -11, ແຟັກ: + 856 (0) 21 313 512* |

**<u>ໝາຍເຫດ:</u>**

- ບໍລິສັດ ຫຼື ຕົວແທນຈຳໜ່າຍ ທີ່ມາຍື່ນເອກະສານສົມທຽບລາຄາ ຕ້ອງຍິນດີທີ່ຈະເຮັດສັນຍາໄລຍະຍາວກັບອົງການ, ຮັບເງິນໂອນ, ຮັບແຊັກ (Check), ແລະ ສາມາດຕິດໜີ້ໄດ້.
- ເອກະສານ ແລະ ຂໍ້ມູນຖືກຕ້ອງຕາມເງື່ອນໄຂ ຕ້ອງປົກປິດເປັນຄວາມລັບ ແລະ ບັນຈຸໃນຊອງທີ່ປິດຢ່າງສະນິດແໜ້ນ, ການຕື່ມລາຄາຄວນຄິດໄລ່ໃນຄອມພິວເຕີ ຫຼື ຂຽນກໍ່ໄດ້ ແຕ່ໃຫ້ລະອຽດ ແລະ ຫຼີກເວັ້ນການເປື້ອນ ຫຼື ຕື່ມຜິດ (ຖ້າມີການຄິດໄລ່ຜິດພາດຈະບໍ່ໄດ້ພິຈາລະນາຕາມເງື່ອນໄຂ).
- ເອກະສານທີ່ທາງບໍລິສັດ ຫຼື ຕົວແທນຈຳໜ່າຍ ໄດ້ສົ່ງຫາແມ່ນບໍ່ສາມາດຖອນຄືນໄດ້.

ວັນທີ: 20 MAR 2025

ອົງການແພລນສາກົນ ປະຈຳ ສປປ ລາວ

**ແສງສັນຕິສຸກ ຊະນະສີສານ**
ຮອງອຳນວຍການ
ອົງການແພລນສາກົນ ປະຈຳ ສປປ ລາວ